VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SIGATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ 001 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ 08 MAR 2023.

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2023

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2023 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນວັນທີ 08 ມີນາ 2023 ທີ່ອາຄານສຳນັກງານວຽງຈັນເຊັ້ນເຕີ. ໂດຍການເປັນປະທານຂອງທ່ານ ເຫີ ຈຸ່ນ ປະທານສະພາບໍລິຫານ, ຈຳນວນສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມປະຊຸມແມ່ນມີ 11 ທ່ານ ຖືວ່າຄົບອົງປະຊຸມ .

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປຶກສາຫາລືກ່ຽວກັບເລື່ອງການເຊັ້ນສັນຍາເຈດຈຳນົງກ່ຽວກັບການຊື້-ຂາຍ ຫ້ອງໃນຕຶກອາຄານສຳນັກງານຫ້ອງການ ຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ພ້ອມໄດ້ມີມະຕິຕົກລົງຕາມລາຍລະອຽດດັ່ງລຸ່ມນີ້:

ມະຕິ: ເຫັນດີໃຫ້ ວຈຊຕ ເຊັ້ນສັນຍາເຈດຈຳນົງກ່ຽວກັບການຊື້-ຂາຍຫ້ອງໃນຕຶກອາຄານສຳນັກງານຫ້ອງການຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ແລ້ວຈະມີການນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ຂອງ ວຈຊຕ ຄັ້ງຕໍ່ໄປ ເພື່ອພິຈາລະນາ ແລະ ຮັບຮອງ, ຫຼັງຈາກນັ້ນຈຶ່ງຈະມີການເຊັ້ນສັຍຍາຢ່າງເປັນທາງການ.

ສະພາບໍລິຫານມີຄຳເຫັນວ່າ: ປະຈຸບັນນີ້ ຕະຫຼາດການໃຫ້ເຊົ່າຫ້ອງການໃນນະຄອນຫຼວງກຳລັງມີການຟື້ນຟູຂຶ້ນ ພື້ນທີ່ຫ້ອງການທີ່ມີເຈດຈຳນົງໃນການຊື້ນັ້ນ ແມ່ນແທດເໝາະກັບແຜນການລົງທຶນ ແລະ ການພັດທະນາ ຂອງ ວຈຊຕ. ການເຊັ້ນສັນຍາເຈດຈຳນົງໃນຄັ້ງນີ້ ແມ່ນພຽງເປັນການຈ່າຍເງິນມັດຈຳເບື້ອງຕົ້ນເທົ່ານັ້ນ ເພື່ອເປັນການຈອງບຸລິມະສິດໃນການເຈລະຈາເງື່ອນໄຂຕ່າງໆກ່ຽວກັບການຊື້ຊັບສິນດັ່ງກ່າວຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.

ປະທານສະພາບໍລິຫານ

He Jun